Australian Aid

ALUMNI INNOVATION GRANTS

# ບົດແນະນຳກ່ຽວກັບການສະໝັກ ແລະ ການຄັດເລືອກ

# APPLICATION AND SELECTION GUIDELINES

## ທຶນຊ່ວຍເຫຼືອຂະໜາດນ້ອຍສຳລັບອະດີດນັກສຶກສາລາວ-ອິດສະຕຣາລີ

# ປຶ້ມແນະນຳກ່ຽວກັບການສະໝັກ ແລະ ການຄັດເລືອກ

ສະຖາບັນລາວ-ອົດສະຕຣາລີ

# ສາລະບານ


1. ເປົ້າໝາຍ ແລະ ຈຸດປະສົງ ........ 3
2. ເງື່ອນໄຂການສະໝັກທຶນ ........ 6
3. ການແຈ້ງກ່ຽວກັບຜົນປະໂຫຍດທັບຊ້ອນ ........ 6
4. ກິດຈະກຳທີ່ບໍ່ເຂົ້າເງື່ອນໄຂ ........ 7
5. ມູນຄ່າທຶນ ........ 7
6. ຂະບວນການສະໝັກ ........ 7
7. ເງື່ອນໄຂການຄັດເລືອກ ........ 8
8. ຂະບວນການຄັດເລືອກ ........ 9

ໄລຍະທີ I: ........ 9

ໄລຍະທີ 2: ........ 10

9. ຂໍ້ກຳນົດ ແລະ ເງື່ອນໄຂຂອງທຶນ ........ 10

9.1 ຂໍ້ກຳນົດ ແລະ ເງື່ອນໄຂທົ່ວໄປ ........ 10

9.2 ການເບີກຈ່າຍເງິນທຶນ ........ 11

9.3 ການສິ້ນສຸດ ຫຼື ການຖອນການສະໜອງທຶນ ........ 11

9.4 ການເສຍອາກອນ ........ 12

9.5 ປະກັນໄພ ........ 12

10. ການສະໜັບສະໜູນ ແລະ ການແບ່ງປັນຄວາມຮູ້ຂອງຜູ້ໄດ້ຮັບທຶນ ........ 13
11. ການຕິດຕາມການປະຕິບັດງານ ແລະ ການປະເມີນຜົນ ........ 13
12. ການລາຍງານ ແລະ ການສະສາງທຶນ ........ 14
13. ຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງສັງຄົມ ........ 15
14. ການຄຸ້ມຄອງຄວາມສ່ຽງ ແລະ ການສໍ້ໂກງ ........ 16
15. ການປະຊາສຳພັນ ແລະ ອັດຕະລັກຂອງອົດສະຕຣາລີ ........ 16
16. ຊັບສິນທາງປັນຍາ ........ 17
17. ຄວາມເປັນສ່ວນຕົວ ແລະ ອິດສະຫຼະຂອງຂໍ້ມູນ ........ 17
18. ການປົກປ້ອງເດັກ ........ 18

19. ຄໍາຮ້ອງທຸກ ແລະ ການອຸທອນ........................................ 18
20. ລາຍລະອຽດໃນການຕິດຕໍ່........................................ 19

# 1. ເປົ້າໝາຍ ແລະ ຈຸດປະສົງ

ປະເທດອົດສະຕຣາລີ ສະໜັບສະໜູນການພັດທະນາຊັບພະຍາກອນມະນຸດໃນ ສປປ ລາວ ນັບຕັ້ງແຕ່ປີ 2013 ໂດຍມີການສະໜອງທຶນການສຶກສາ, ການຝຶກອົບຮົມ,ສະໜັບສະໜູນການດຳເນີນກິດຈະກຳຂອງອະດີດນັກສຶກສາ ແລະ ສ້າງຄວາມເຂັ້ມແຂງ - ຄວາມສາມາດໃຫ້ແກ່ອົງການຈັດຕັ້ງ.

ລັດຖະບານອົດສະຕຣາລີ, ໂດຍຜ່ານ ສະຖາບັນລາວ-ອົດສະຕຣາລີ (LAI) ໄດ້ສະໜອງ ທຶນຊ່ວຍເຫຼືອຂະໜາດນ້ອຍສຳລັບອະດີດນັກສຶກສາລາວ-ອົດສະຕຣາລີ (AIG) ຕັ້ງແຕ່ປີ 2020. ທຶນ AIG ແມ່ນໂຄງການສະໜອງທຶນຂະໜາດນ້ອຍ ທີ່ສາມາດເຂົ້າເຖິງໄດ້ໂດຍອະດີດນັກສຶກສາລາວ-ອົດສະຕຣາລີທຸກຄົນທີ່ຢູ່ໃນ ສປປ ລາວ ເພື່ອນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດຄວາມຄິດໂຄງການທີ່ເຂົາເຈົ້າສະເໜີມາ. ຈາກການສະໜອງທຶນຂອງ 5 ຮອບທີ່ຜ່ານມານັ້ນ ມີຈຳນວນທັງໝົດ 25 ໂຄງການທີ່ໄດ້ຮັບການຈັດຕັ້ງປະຕິບັດ ເຊິ່ງໄດ້ສະໜັບສະໜູນຊຸມຊົນທ້ອງຖິ່ນ ແລະ ອົງການຈັດຕັ້ງຕ່າງໆ ເພື່ອຟື້ນຟູຜົນກະທົບຂອງພະຍາດໂຄວິດ19, ຕອບໂຕ້ການປ່ຽນແປງດິນຟ້າອາກາດ, ສະໜັບສະໜູນການມີສ່ວນຮ່ວມຂອງຄົນພິການ ແລະ ເສີມຂະຫຍາຍຄວາມເຂັ້ມແຂງທາງດ້ານເສດຖະກິດໃຫ້ແກ່ແມ່ຍິງຢູ່ທ້ອງຖິ່ນ.

ສະຖາບັນລາວ-ອົດສະຕຣາລີ (LAI) ໃຫ້ຄຳນິຍາມຄຳວ່າ "ນະວັດຕະກຳ" ໃນສະພາບເງື່ອນໄຂຂອງທຶນ AIG ແມ່ນ ການພັດທະນາການແກ້ໄຂບັນຫາທີ່ສ້າງຜົນກະທົບ, ມີຄວາມຍືດຍຸ່ນ ແລະ ຍືນຍົງ ໂດຍຜ່ານຂະບວນການຄິດທີ່ສ້າງສັນ, ໝູນໃຊ້ໃຫ້ແທດເໝາະກັບທ້ອງຖິ່ນ, ມີການປະສານສົມທົບຂອງຫຼາຍຂະແໜງການ ແລະ ເນັ້ນໜັກຜົນໄດ້ຮັບທາງບວກທີ່ຍືນຍົງ ໃຫ້ແກ່ຊຸມຊົນລາວ. ສຳລັບ ທຶນ AIG ຮອບທີ 7 ນີ້, ຮຽກຮ້ອງໃຫ້ບົດສະເໜີໂຄງການເພື່ອຂໍທຶນ ມີການສະແດງໃຫ້ເຫັນເຖິງວິທີການທີ່ເຮັດແນວໃດໃຫ້ໂຄງການສາມາດເຊື່ອມສານຫຼັກການກ່ຽວກັບຄວາມສະເໝີພາບບົດບາດຍິງ-ຊາຍ, ການມີສ່ວນຮ່ວມຂອງຄົນພິການ ແລະ ການມີສ່ວນຮ່ວມຂອງພາກສ່ວນຕ່າງໆໃນສັງຄົມ. ນີ້ກໍເພື່ອຮັບປະກັນວ່າ ໂຄງການຈະສາມາດເຂົ້າເຖິງ ແລະ ສ້າງຜົນປະໂຫຍດໃຫ້ແກ່ທຸກໆພາກສ່ວນຂອງຊຸມຊົນ.

AIG ຮອບທີ 7 ຈະສືບຕໍ່ສົ່ງເສີມແນວທາງການພັດທະນາຊຸມຊົນທີ່ຄອບຄຸມຫຼາຍດ້ານ ເຊັ່ນ ໂຄງການທີ່ເນັ້ນໃສ່ຄວາມຕ້ອງການຢູ່ສະຖານທີ່ເຮັດວຽກຂອງທ່ານ, ຄວາມຄິດລິເລີ່ມຂອງຊຸມຊົນ ແລະ ການແກ້ໄຂບັນຫາທີ່ນຳໃຊ້ວິທີການຄົ້ນຄວ້າ ແລະ ປະສົມປະສານການມີສ່ວນຮ່ວມ, ເນັ້ນໃສ່ຄວາມຍືນຍົງ ພ້ອມກັບການມີສ່ວນຮ່ວມຢ່າງຕັ້ງໃຈຂອງອະດີດນັກສຶກສາ. ໂຄງການຂອງທ່ານຈະຕ້ອງມີເປົ້າໝາຍເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມຄົນທີ່ຂາດໂອກາດ, ສົ່ງເສີມການຮ່ວມມືທີ່ດີ ພ້ອມກັບ ເສີມສ້າງທັກສະ ແລະ ຄວາມໝັ້ນໃຈຂອງອະດີດນັກສຶກສາ ໃຫ້ສາມາດນຳພາການລິເລີ່ມທີ່ສົ່ງຜົນກະທົບທາງບວກໃນລາວ.

ໂດຍອີງຕາມຍຸດທະສາດຂອງປະເທດອົດສະຕຣາລີກ່ຽວກັບເສດຖະກິດໃນພາກພື້ນອາຊີຕາເວັນອອກສຽງໃຕ້ ຕັ້ງແຕ່ນີ້ຮອດປີ 2040, ສາຍພົວພັນທາງການທູດລະຫວ່າງປະເທດອົດສະຕຣາລີ ແລະ ສປປ ລາວ ທີ່ມີຍາວນານຫຼາຍກວ່າ 70 ປີ ບວກກັບຄຳໝັ້ນສັນຍາຂອງປະເທດອົດສະຕຣາລີ ໃນການພັດທະນາຊັບພະຍາກອນມະນຸດໃນ ສປປ ລາວ, ທຶນ AIG ຮອບທີ 7 ຈະກວມເອົາບັນດາໂຄງການທີ່ເປັນການສົ່ງເສີມສາຍພົວພັນ 2 ຝ່າຍ ພ້ອມທັງ ສາຍພົວພັນທາງດ້ານວັດທະນທຳ, ສັງຄົມ ແລະ ເສດຖະກິດ ທີ່ອຸດົມຮັ່ງມີຂອງທັງ 2 ຊາດ.

ປະເພດຫົວຂໍ້ທີ່ຈະສະເໜີຂໍການສະໜັບສະໜູນທຶນ AIG ຮອບທີ 7 ລວມມີ:

ລຸ່ມນີ້ຈະແມ່ນຄຳອະທິບາຍກວ້າງໆກ່ຽວກັບຫົວຂໍ້ຕ່າງໆທີ່ມີຄວາມສອດຄ່ອງກັບການຮ່ວມມື 2 ຝ່າຍລະຫວ່າງ ປະເທດອົດສະຕຣາລີ ແລະ ສປປ ລາວ. ຂໍເຊີນຊວນໃຫ້ຜູ້ສະໝັກທຶນຄົ້ນຄວ້າຫາແນວຄວາມຄິດໂຄງການທີ່ມີລັກສະນະເພາະຈະຈິງຕື່ມອີກໃນຂົງເຂດທີ່ຕົນສົນໃຈ. ສະຖາບັນລາວ-ອົດສະຕຣາລີ (LAI) ສົ່ງເສີມໃຫ້ມີກິດຈະກຳປະເພດຕ່າງໆທີ່ມີລັກສະນະແຕກຕ່າງກັນ ເຊັ່ນ: ການພັດທະນາຊຸມຊົນ, ການຄົ້ນຄວ້າ ແລະ ການຝຶກອົບຮົມ/ສ້າງຂີດຄວາມສາມາດ.

1) ຂະແໜງດິນຟ້າອາກາດ, ສິ່ງແວດລ້ອມ ແລະ ພະລັງງານທົດແທນ

   ໂຄງການທີ່ຊຸກຍູ້ຄວາມຄິດ, ການປະຕິບັດງານ ແລະ ເທັກໂນໂລຊີໃໝ່ໆ ທີ່ນຳໃຊ້ເພື່ອຊ່ວຍຂະແໜງການຕ່າງໆໃນການປັບຕົວ ແລະ ມີຄວາມທົນທານທີ່ດີກວ່າເກົ່າໃນການປະເຊີນກັບຜົນກະທົບຈາກການປ່ຽນແປງດິນຟ້າອາກາດ. ໂຄງການທີ່ຮວບຮວມບັນດາການປະຕິບັດທີ່ມີຄວາມຍືນຍົງ ໃນຂະແໜງການກະສິກຳ, ຊີວິດການເປັນຢູ່ ແລະ ກິດຈະກຳລິເລີ່ມໃໝ່ໃນຂັ້ນຊຸມຊົນ ທີ່ກ່ຽວຂ້ອງກັບການສ້າງແຫຼ່ງພະລັງງານທາງເລືອກ, ຄວາມມີປະສິດທິພາບ ແລະ ການກັກເກັບພະລັງງານ.

2) ການພັດທະນາຄົນ, ການສຶກສາ ແລະ ຊັບພະຍາກອນມະນຸດ

   ໂຄງການທີ່ສົ່ງເສີມການປັບຕົວ, ລະດົມໃຫ້ມີການຄົ້ນຄິດແບບຜູ້ປະກອບການ ແລະ ຊຸກຍູ້ນະວັດຕະກຳ. ການລິເລີ່ມໃໝ່ ທີ່ສຸມໃສ່ການສ້າງທັກສະ ແລະ ຄວາມຮູ້ໃຫ້ແກ່ປະຊາຊົນ ເພື່ອປະເຊີນໜ້າກັບໂລກທີ່ມີການປ່ຽນແປງໄວ ໃນຂະນະທີ່ໃຫ້ການສົ່ງເສີມວິທີການແກ້ໄຂບັນຫາໂດຍນຳໃຊ້ນະວັດຕະກຳ ເພື່ອປະກອບສ່ວນໃຫ້ແກ່ການພັດທະນາແບບຍືນຍົງ ແລະ ສ້າງຄວາມທົນທານໃຫ້ແກ່ຊຸມຊົນຂອງເຂົາເຈົ້າ ແລະ ອື່ນໆ.

3) ເສດຖະກິດ, ການຄ້າ ແລະ ການລົງທຶນ

   ໂຄງການທີ່ສຸມໃສ່ການປະກອບສ່ວນທີ່ເປັນການຫັນໄປສູ່ກິດຈະກຳທາງດ້ານເສດຖະກິດ, ປັບປຸງຄວາມມີປະສິດທິຜົນທາງການຄ້າ ຫຼື ເສີມຂະຫຍາຍໂອກາດດ້ານການລົງທຶນ.

4) ຄວາມປອດໄພທາງໄຊເບີ ແລະ ການຫັນປ່ຽນສູ່ດີຈີຕອນ

   ຄວາມປອດໄພທາງໄຊເບີ ແມ່ນໂຄງການທີ່ແນໃສ່ການປ້ອງກັນຮັກສາລະບົບດີຈີຕອນ ແລະ ຂໍ້ມູນໃຫ້ປອດໄພຈາກການໂຈມຕີ ຫຼື ການເຂົ້າເຖິງໂດຍບໍ່ໄດ້ຮັບອະນຸຍາດ. ການຫັນປ່ຽນສູ່ດີຈີຕອນ ແມ່ນຂະບວນການນຳໃຊ້ເຕັກໂນໂລຊີໃໝ່ໆ ເພື່ອປັບປຸງວິທີການເຮັດວຽກ ແລະ ການບໍລິການຂອງອົງກອນຂອງຕົນ.
   ໂຄງການທີ່ມີຈຸດປະສົງເພື່ອຊ່ວຍເຫຼືອອົງກອນຂອງຕົນໃນການປະດິດສ້າງນະວັດຕະກຳໃໝ່ໆ ໃນຂະນະທີ່ຍັງຮັກສາຄວາມປອດໄພໃນໂລກດີຈີຕອນທີ່ມີການປ່ຽນແປງຢ່າງໄວວາ.

5) ກະສິກຳ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ

ໂຄງການທີ່ສົ່ງເສີມການເຮັດກະສິກຳແບບຍືນຍົງທີ່ສຸມໃສ່ການຮັກສາສະພາບຂອງດິນ, ການສະຫງວນນ້ຳ, ການຮັກສາຊີວະນາໆພັນ ແລະ ຫຼຸດຜ່ອນການນຳໃຊ້ສານເຄມີສັງເຄາະ ເຊັ່ນ: ຢາຂ້າຫຍ້າ ແລະ ປຸ໋ຍເຄມີ.

ມັນອາດຈະລວມມີ ໂຄງການທີ່ສົ່ງເສີມວິທີການທີ່ທັນສະໄໝເພື່ອຊ່ວຍຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ ເຊັ່ນ ການປັບປຸງລະບົບການແຈກຢາຍ, ຫຼຸດຜ່ອນສິ່ງເສດເຫຼືອຈາກອາຫານ, ເພີ່ມຜົນຜະລິດຂອງພືນລະປູກແບບຍືນຍົງ ແລະ ຮັບປະກັນການເຂົ້າເຖິງອາຫານຢ່າງເທົ່າທຽມ.

6) ຄວາມໝັ້ນຄົງທາງສຸຂະພາບ

ໂຄງການທີ່ມີການເຊື່ອມສານຂໍ້ພິຈາລະນາທາງດ້ານສິ່ງແວດລ້ອມ ເຂົ້າໃນການບໍລິການສາທາລະນະສຸກ ທີ່ໃຫ້ບູລິມະສິດແກ່ການເຂົ້າເຖິງການບໍລິການຢ່າງເທົ່າທ່ຽມ ແລະ ການມີສ່ວນຮ່ວມຂອງກຸ່ມຄົນຊົນເຜົ່າ ແລະ ຊຸມຊົນຫ່າງໄກຊອກຫຼີກ ຫຼື ພື້ນທີ່ໆການບໍລິການທີ່ຍັງບໍ່ທັນໄດ້ໄປຮອດໄປເຖິງ.
ໂຄງການທີ່ຂະຫຍາຍການນຳໃຊ້ເຕັກໂນໂລຊີ ແລະ ວິທີການແກ້ໄຂທີ່ມີນະວັດຕະກຳ ເພື່ອເພີ່ມປະສິດທິຜົນການສະໜອງການບໍລິການສາທາລະນະສຸກ, ໃນເວລາດຽວກັນກໍຍັງສ້າງການມີສ່ວນຮ່ວມຂອງຊຸມຊົນທ້ອງຖິ່ນ, ຜູ້ສະໜອງການບໍລິການສາທາລະນະສຸກ, ຜູ້ສ້າງນະໂຍບາຍ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າມາຮ່ວມມືໃນການວາງແຜນ ແລະ ຈັດຕັ້ງປະຕິບັດ, ເໜັ້ນໜັກການປ້ອງກັນພະຍາດ ແລະ ວິຖີຊີວິດທີ່ສົ່ງເສີມສຸຂະພາບທີ່ດີ.

7) ສື່, ສິນລະປະ ແລະ ວັດທະນະທຳ ທີ່ຫຼາກຫຼາຍ

ໂຄງການໃນຂົງເຂດສື່, ສິນລະປະ ແລະ ວັດທະນະທຳ ທີ່ມີຄວາມຫຼາກຫຼາຍ ສາມາດຂະຫຍາຍກິດຈະກຳຕ່າງໆທີ່ມີຈຸດປະສົງເພື່ອສົ່ງເສີມ, ອະນຸລັກ ແລະ ສະເຫຼີມສະຫຼອງການສະແດງອອກທາງວັດທະນະທຳທີ່ຫຼາກຫຼາຍ ແລະ ຜົນງານພາກພຽນທາງສິນລະປະ ຂອງປະເທດອົດສະຕຣາລີ ແລະ ສປປ ລາວ.

ໂດຍອີງຕາມຄວາມຕ້ອງການອັນສະເພາະຂອງແຕ່ລະໂຄງການ, ຜູ້ໄດ້ຮັບທຶນ AIG ຮອບທີ 7 ອາດໄດ້ຮັບທຶນສູງເຖິງ **10,000** ໂດລາອົດສະຕຣາລີ (AUD), ພ້ອມກັບມີເວລາຈັດຕັ້ງປະຕິບັດຍາວເຖິງ **8 ເດືອນ**.

ຈຸດປະສົງຂອງທຶນຊ່ວຍເຫຼືອຂະໜາດນ້ອຍສຳລັບອະດີດນັກສຶກສາລາວ-ອົດສະຕຣາລີ (AIG) ແມ່ນ:

- ເພື່ອໃຫ້ການສະໜັບສະໜູນຄວາມຕ້ອງການທີ່ມີໃນປະຈຸບັນ ແລະ ຫຼາກຫຼາຍຂອງຊຸມຊົນລາວ - ໂດຍສະເພາະແມ່ນກຸ່ມແມ່ຍິງ, ເດັກຍິງ, ຄົນພິການ, ຄົນຊົນຊາດຊົນເຜົ່າ, ຄົນທີ່ມີຄວາມຫຼາກຫຼາຍທາງເພດ ແລະ ກຸ່ມຄົນທີ່ຖືກເບິ່ງຂ້າມ ໃນ ສປປ ລາວ.
- ເພື່ອສົ່ງເສີມການຮ່ວມມື 2 ຝ່າຍລະຫວ່າງ ລາວ - ອົດສະຕຣາລີ, ລວມມີ ສາຍພົວພັນດ້ານວັດທະນະທຳ, ສັງຄົມ ແລະ ເສດຖະກິດຂອງ 2 ຊາດ.
- ເພື່ອສະໜອງທຶນທີ່ຈຳເປັນໃຫ້ທັນສະພາບການ ໂດຍແນໃສ່ສະໜັບສະໜູນອະດີດນັກສຶກສາໃຫ້ໄດ້ນຳໃຊ້ທັກສະ ແລະ ຄວາມຮູ້ຂອງເຂົາເຈົ້າ.

- ເພື່ອພັດທະນາ, ບຳລຸງຮັກສາ ແລະ ສ້າງຄວາມເຂັ້ມແຂງແກ່ການເຊື່ອມໂຍງດ້ານສາຍອາຊີບ ແລະ ສົ່ງເສີມການຮ່ວມງານລະຫວ່າງອະດີດນັກສຶກສາ, ລັດຖະບານອົດສະຕຣາລີ, ຫົວໜ່ວຍທຸລະກິດ, ອົງການຈັດຕັ້ງ ແລະ ສະຖາບັນການສຶກສາຈາກປະເທດອົດສະຕຣາລີ.
- ເພື່ອເຊື່ອມໂຍງກັບບັນດາອະດີດນັກສຶກສາດ້ວຍກັນໃນທົ່ວສາຂາວິຊາ, ສາຍອາຊີບ, ອົງການຈັດຕັ້ງ - ສະຖາບັນ ແລະ ພາກພື້ນທາງພູມມີສາດ ເພື່ອເປີດໂອກາດໃຫ້ໄດ້ຮ່ວມແລກປ່ຽນການປະຕິບັດທີ່ດີ ແລະ ສ້າງໂອກາດໃນການປະສານສົມທົບເຊິ່ງກັນແລະ ກັນ.

# 2. ເງື່ອນໄຂການສະໝັກທຶນ

ທຶນ AIG ເປີດໃຫ້ກັບອະດີດນັກສຶກສາລາວ-ອົດສະຕຣາລີ ທຸກທ່ານ ລວມມີ ອະດີດນັກສຶກສາທຶນການສຶກສາຂອງປະເທດອົດສະຕຣາລີ (AAS), ອະດີດນັກສຶກສາທຶນການສຶກສາໄລຍະສັ້ນຂອງປະເທດອົດສະຕຣາລີ (AASC), ອະດີດນັກສຶກສາທຶນການສຶກສາພາຍໃນປະເທດທີ່ສະໜັບສະໜູນໂດຍອົດສະຕຣາລີ (LANS) ແລະ ອະດີດນັກສຶກສາທຶນການພັດທະນາເພື່ອຄົນພິການ (DID), ພ້ອມທັງ ອະດີດນັກສຶກສາທີ່ໃຊ້ທຶນຕົນເອງໄປຮຽນຢູ່ປະເທດອົດສະຕຣາລີ ຫຼື ຜູ້ທີ່ຈົບການສຶກສາຈາກສະຖາບັນການສຶກສາທີ່ເປັນທາງການຂອງປະເທດອົດສະຕຣາລີ.

ອະດີດນັກສຶກສາ ສາມາດສະໝັກຂໍທຶນ ໃນນາມບຸກຄົນ ຫຼື ເປັນສ່ວນໜຶ່ງຂອງກຸ່ມທີ່ມີສະມາຊິກ 4 ຄົນ ທັງທີ່ເປັນ ຫຼື ບໍ່ເປັນອະດີດນັກສຶກສາ.

ພວກເຮົາຂໍເຊີນຊວນໃຫ້ອະດີດນັກສຶກສາທຸກຄົນສະໝັກທຶນນີ້ ແລະ ໂດຍສະເພາະຂໍເຊີນຊວນບັນດາອະດີດນັກສຶກສາທີ່ມີຄວາມພິການ, ອະດີດນັກສຶກສາທີ່ຢູ່ເຂດຫ່າງໄກ, ອະດີດນັກສຶກສາທີ່ມີຄວາມຫຼາກຫຼາຍທາງເພດ LGBTIQ+, ອະດີດນັກສຶກສາທີ່ເປັນແມ່ຍິງ ແລະ ອະດີດນັກສຶກສາທີ່ຢູ່ໃນກຸ່ມດ້ອຍໂອກາດ ໃຫ້ຍື່ນສະໝັກທຶນນີ້.

# 3. ການແຈ້ງກ່ຽວກັບຜົນປະໂຫຍດທັບຊ້ອນ

**ຜົນປະໂຫຍດທັບຊ້ອນ** ແມ່ນ ຂໍ້ຂັດແຍ່ງ ເຊິ່ງມັກເກີດຂຶ້ນຫຼາຍທີ່ສຸດ ລະຫວ່າງ ຂໍ້ກຳນົດ ແລະ ຜົນປະໂຫຍດ. ຜົນປະໂຫຍດທັບຊ້ອນ ເກີດຂຶ້ນເມື່ອ ຜົນປະໂຫຍດສ່ວນຕົວຂອງບຸກຄົນ – ຄອບຄົວ, ໝູ່ເພື່ອນ, ການເງິນ ຫຼື ປັດໄຈທາງສັງຄົມ – ອາດມີອິດທິພົນຕໍ່ການຕັດສິນ, ການຕັດສິນໃຈ ຫຼື ການກະທຳຂອງບຸກຄົນນັ້ນໃນຊ່ວງໄລຍະຈັດຕັ້ງປະຕິບັດໂຄງການ.

ຕ້ອງໄດ້ມີການແຈ້ງເຖິງຜົນປະໂຫຍດທັບຊ້ອນ ແລະ ຈະມີການປະເມີນຕາມແຕ່ລະກໍລະນີ. **ຂໍແຈ້ງໃຫ້ທ່ານຊາບວ່າ ການແຈ້ງກ່ຽວກັບຜົນປະໂຫຍດທັບຊ້ອນ ຈະບໍ່ມີຜົນຕໍ່ການພິຈາລະນາໃນການຕັດສິນໂຄງການຂອງທ່ານ ໃນການໄດ້ຮັບທຶນ AIG**.

ຜົນປະໂຫຍດທັບຊ້ອນ ສາມາດລວມມີ:

- ອະດີດນັກສຶກສາທີ່ເຮັດວຽກໂດຍກົງໃຫ້ກັບລັດຖະບານແຫ່ງ ສປປ ລາວ.
- ອະດີດນັກສຶກສາທີ່ເຮັດວຽກໂດຍກົງກັບ ລັດຖະບານອົດສະຕຣາລີ - ອາດຈະຢູ່ພາຍໃນສະຖານທູດອົດສະຕຣາລີ ຫຼື ໂຄງການທີ່ສະໜັບສະໜູນໂດຍລັດຖະບານອົດສະຕຣາລີ.

- ສະຖານະການອື່ນໆທີ່ອາດຈະຖືກພິຈາລະນາວ່າ ມີຜົນປະໂຫຍດທັບຊ້ອນ.

# 4. ກິດຈະກຳທີ່ບໍ່ເຂົ້າເງື່ອນໄຂ

ປະເພດບົດສະເໜີໂຄງການຕໍ່ໄປນີ້ຈະບໍ່ເຂົ້າເງື່ອນໄຂໄດ້ຮັບທຶນ ຄື:

- ຄ່າທຳນຽມ (ເຊັ່ນ: ຄ່າຮຽນ, ຄ່າສະໝັກຮຽນ, ການເຂົ້າຮຽນ) ສຳລັບ ການສຶກສາ, ການຝຶກອົບຮົມ ຫຼື ຫຼັກສູດໄລຍະສັ້ນ ທີ່ເປັນທາງການ ຢູ່ໃນ ສປປ ລາວ, ອົດສະຕຣາລີ ຫຼື ປະເທດອື່ນໆ.
- ບົດສະເໜີໂຄງການທີ່ ກິດຈະກຳທັງໝົດ ຫຼື ກິດຈະກຳຕົ້ນຕໍ ແມ່ນການຈັດຊື້ອຸປະກອນ ຫຼື ການກໍ່ສ້າງ.
- ບົດສະເໜີໂຄງການ ທີ່ການປະຕິບັດຈິງຈະໃຊ້ເພື່ອອຸດໜູນກິດຈະກຳທາງການຄ້າໃຫ້ແກ່ວິສາຫະກິດໃດໜຶ່ງ ເຊິ່ງປົກກະຕິແລ້ວກິດຈະກຳເຫຼົ່ານັ້ນຕ້ອງລົງທຶນດ້ວຍເງິນຂອງວິສາຫະກິດນັ້ນເອງຢູ່ແລ້ວ.
- ບົດສະເໜີໂຄງການທີ່ຜູ້ໄດ້ຮັບຜົນປະໂຫຍດຕົ້ນຕໍຂອງທຶນນີ້ ແມ່ນ ອະດີດນັກສຶກສາ.

# 5. ມູນຄ່າທຶນ

ທຶນ AIG ຮອບທີ 7 ຈະສະໜອງທຶນໃຫ້ສູງເຖິງ 10,000 ໂດລາອົດສະຕຣາລີ ເພື່ອໃຫ້ອະດີດນັກສຶກສາໄດ້ໃຊ້ໃນການດຳເນີນໂຄງການຂອງເຂົາເຈົ້າ.

# 6. ຂະບວນການສະໝັກ

ສະຖາບັນລາວ-ອົດສະຕຣາລີ (LAI) ໂຄສະນາກ່ຽວກັບທຶນ AIG ຜ່ານທາງເວັບໄຊທ໌ ແລະ ໜ້າເຟດສ໌ບຸກຂອງ LAI, ໜ້າເຟດສ໌ບຸກ Australia in Laos, ເວັບໄຊ້ 360Alumni ແລະ ໜ້າເຟດສ໌ບຸກ Laos Australia Alumni Club (LAAC) ພ້ອມທັງສົ່ງອີເມວ ແລະ ສົ່ງແຈ້ງບອກໃນກຸ່ມອະດີດນັກສຶກສາ ທາງອອນລາຍ ເພື່ອດຶງດູດໃຫ້ມີບົດສະເໜີໂຄງການຂໍທຶນໃຫ້ຫຼາຍໆຈາກທົ່ວທຸກເຄືອຄ່າຍຂອງອະດີດນັກສຶກສາ.

**ທຸກໆບົດສະເໜີໂຄງການເພື່ອຂໍທຶນ ຕ້ອງໄດ້ຮັບພາຍໃນ 17:00 ໂມງ ຂອງວັນອາທິດທີ 12 ຕຸລາ 2025.** LAI ຂໍສະແດງຄວາມເສຍໃຈທີ່ຈະບໍ່ສາມາດຍອມຮັບເອົາບົດສະເໜີໂຄງການທີ່ສົ່ງມາຊ້າ.

ຜູ້ສະໝັກອາດສາມາດສົ່ງຫຼາຍກວ່າ 1 ບົດສະເໜີໂຄງການ, ແຕ່ວ່າ LAI ຈະສະໜອງ 1 ທຶນໃຫ້ແກ່ຜູ້ສະໝັກ 1 ທ່ານເທົ່ານັ້ນ. ຖ້າວ່າ ຜູ້ສະໝັກຍື່ນ 2 ບົດສະເໜີໂຄງການທີ່ແຕກຕ່າງກັນ, ເຊິ່ງບົດສະເໜີໂຄງການ 1 ແມ່ນໃນນາມບຸກຄົນ ແລະ ອີກບົດສະເໜີໂຄງການ 1 ແມ່ນໃນນາມເປັນສະມາຊິກຂອງກຸ່ມ, ທາງ LAI ຈະພິຈາລະນາທັງ 2 ບົດສະເໜີໂຄງການ ໂດຍຈະພິຈາລະນາຕາມແຕ່ລະກໍລະນີ.

ບົດສະເໜີໂຄງການອາດຈະຖືກພິຈາລະນາວ່າບໍ່ຄົບເງື່ອນໄຂ ຖ້າວ່າບໍ່ຕື່ມຂໍ້ມູນໃຫ້ຄົບຖ້ວນ, ບໍ່ຄັດຕິດເອກະສານຕ່າງໆທີ່ຕ້ອງການ, ເອກະສານບໍ່ມີລາຍເຊັນ, ການຈັດສັນງົບປະມານສິ່ງຜົນປະໂຫຍດໃຫ້ແກ່ອະດີດນັກສຶກສາຫຼາຍເກີນໄປ ຫຼື

ຕອບຄໍາຖາມທີ່ມີໃນໂຄງຮ່າງປຶດສະເໜີໂຄງການບໍ່ຈະແຈ້ງພຽງພໍ. ປຶດສະເໜີໂຄງການຈະບໍ່ຄືບຕາມເງື່ອນໄຂ ຖ້າວ່າ ພວກເຮົາບໍ່ສາມາດກໍານົດສະຖານະພາບຂອງອະດີດນັກສຶກສາໄດ້.

ກະລຸນາຕື່ມຂໍ້ມູນໃສ່ໃນປຶດສະເໜີໂຄງການຂອງທ່ານຜ່ານຊ່ອງອອນລາຍທາງ **SmartyGrants** (click: https://laos.smartygrants.com.au/AIG7). ຖ້າເອກະສານຂອງທ່ານໃຫຍ່ເກີນໄປທີ່ຈະຄັດຕິດໃນ SmartyGrants, ຂໍໃຫ້ທ່ານບັນທຶກເອກະສານຂອງທ່ານໃນຊ່ອງທາງການແບ່ງປັນ ເຊັ່ນ: Dropbox ຫຼື Google Drive ແລະ ເອົາລິ້ງຂອງເອກະສານຂອງທ່ານໄປໃສ່ໃນ SmartyGrants ແທນ. ຂໍໃຫ້ທ່ານເບິ່ງຄູ່ມືສໍາລັບຜູ້ນໍາໃຊ້ SmartyGrants ໃນເວັບໄຊ້ຂອງສະຖາບັນລາວ-ອົດສະຕຣາລີ https://laosaustraliainstitute.org/

LAI ຂໍສະແດງຄວາມເສຍໃຈທີ່ ພວກເຮົາບໍ່ສາມາດຍອມຮັບຄໍາຮ້ອງທີ່ສົ່ງທາງໄປສະນີ, ແຕ່ວ່າ ສໍາລັບຜູ້ສະໝັກທີ່ມີຄວາມພິການ ຫຼື ຜູ້ທີ່ມີຄວາມສາມາດດ້ານພາສາອັງກິດທີ່ຈໍາກັດ ໃຫ້ສົ່ງອີເມວແຈ້ງທາງ LAI ຕາມທີ່ຢູ່ນີ້: alumni@laosaustraliainstitute.org ເພື່ອຂໍຄວາມຊ່ວຍເຫຼືອໃນການຕື່ມຂໍ້ມູນໃນປຶດສະເໜີໂຄງການຂອງທ່ານ.

ຖ້າ ໂຄງການ ມີຄວາມກ່ຽວຂ້ອງກັບ ຊຸມຊົນ ຫຼື ຄູ່ຮ່ວມງານທີ່ເປັນອົງການຈັດຕັ້ງ, ຫົວໜ່ວຍທຸລະກິດ ຫຼື ສະຖາບັນອື່ນໆ, ຄໍາຮ້ອງນັ້ນ ຕ້ອງໄດ້ມີ ***ໜັງສືຢັ້ງຢືນການສະໜັບສະໜູນ.***

ຄໍາຮ້ອງທີ່ຍື່ນມາຕ້ອງເປັນພາສາອັງກິດ. ການສະໜັບສະໜູນແປພາສາຈະມີໃຫ້ແກ່ ຜູ້ສະໝັກຈາກກຸ່ມທີ່ມີຄວາມຕ້ອງການຊ່ວຍເຫຼືອພິເສດ (equity group). ແຜນງົບປະມານຄວນຍື່ນມາໃນສະກຸນເງິນ**ກີບ** ແລະ **ໂດລາອົດສະຕຣາລີ**. ຖ້າວ່າໃຊ້ເງິນສະກຸນອື່ນ, ຕ້ອງໄດ້ລະບຸລາຍລະອຽດໃນແບບຟອມງົບປະມານ.

# 7. ເງື່ອນໄຂການຄັດເລືອກ

ການຄັດເລືອກຂອງທຶນ AIG ຈະຢູ່ບົນພື້ນຖານການແຂ່ງຂັນ ແລະ ຫຼັກການຄຸນນະທໍາ, ການປະເມີນຄໍາຮ້ອງຈະທຽບກັບເງື່ອນໄຂຕ່າງໆ ດັ່ງນີ້:

1. ໂຄງການ ທີ່ສົ່ງເສີມການຮ່ວມມື 2 ຝ່າຍ, ລວມມີ ການພົວພັນດ້ານວັດທະນະທໍາ, ສັງຄົມ ແລະ ເສດຖະກິດ ຂອງ 2 ຊາດ.
2. ໂຄງການ ທີ່ຕອບສະໜອງຢ່າງຈະແຈ້ງຕໍ່ຫົວຂໍ້ສໍາຄັນໃດໜຶ່ງ ຄື: ສະພາບອາກາດ, ສິ່ງແວດລ້ອມ ແລະ ພະລັງງານທົດແທນ; ການພັດທະນາຄົນ, ການສຶກສາ ແລະ ຊັບພະຍາກອນມະນຸດ; ເສດຖະກິດ, ການຄ້າ ແລະ ການລົງທຶນ; ຄວາມປອດໄພທາງໄຊເບີ ແລະ ການຫັນປ່ຽນສູ່ດີຈີຕອນ; ກະສິກໍາ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ; ຄວາມໝັ້ນຄົງທາງສຸຂະພາບ; ຄວາມຫຼາກຫຼາຍດ້ານສື່, ສິນລະປະ ແລະ ວັດທະນະທໍາ.
3. ໂຄງການ ທີ່ເຊື່ອມໂຍງກັບຄວາມຮູ້ ແລະ ທັກສະທີ່ໄດ້ມາຈາກຫຼັກສູດການສຶກສາຂອງຜູ້ສະໝັກ ທີ່ຮຽນຢູ່ໃນປະເທດອົດສະຕຣາລີ ຫຼື ສປປ ລາວ ແລະ/ຫຼື ປະສົບການທາງສາຍອາຊີບ.

4. ໂຄງການ ຄວນມີຜົນໄດ້ຮັບທີ່ສາມາດວັດແທກໄດ້. ຄໍາຮ້ອງຄວນລະບຸເຈາະຈົງວ່າ ຜົນກະທົບທີ່ຈະເກີດຂຶ້ນຈະສາມາດວັດແທກໄດ້ແນວໃດ ແລະ ອະທິບາຍສັ້ນໆກ່ຽວກັບວິທີການທີ່ທ່ານຈະໃຊ້ເພື່ອບໍາລຸງຮັກສາໂຄງການພາຍຫຼັງໂຄງການສິ້ນສຸດລົງ.
5. ໂຄງການ ທີ່ມີຍຸດທະສາດຈະແຈ້ງ ແລະ ສາມາດເປັນຈິງໄດ້ ສໍາລັບການບັນລຸຈຸດປະສົງຂອງໂຄງການພາຍໃນຂອບເວລາທີ່ກ່າວໄວ້, ລວມເຖິງ ງົບປະມານທີ່ພຽງພໍ ແລະ ມີການປະເມີນຄວາມສ່ຽງທີ່ເໝາະສົມ.
6. ໂຄງການ  ທີ່ມີຄວາມຄຸ້ມຄ່າຕໍ່ໃນການໃຊ້ເງິນ. ຄວາມຄຸ້ມຄ່າໃນການໃຊ້ເງິນ ແມ່ນຈະກໍານົດຕາມ ຄວາມປະຢັດ (ຈ່າຍໜ້ອຍ), ຄວາມມີປະສິດທິຜົນ (ຈ່າຍດີ), ຄວາມມີປະສິດທິພາບ (ຈ່າຍຢ່າງສະຫຼາດ) ແລະ ຄວາມເທົ່າທຽມ (ຈ່າຍຢ່າງຍຸຕິທໍາ). ທ່ານສາມາດເຂົ້າເບິ່ງ ປຶ້ມແນະນໍາເພີ່ມເຕີມຂອງ DFAT ກ່ຽວກັບນະໂຍບາຍດ້ານຄວາມຄຸ້ມຄ່າໃນການໃຊ້ເງິນ ໃນເວັບໄຊທ໌ຂອງກະຊວງ (https://www.dfat.gov.au/aid/who-we-work-with/value-for-money-principles/Pages/value-for-money-principles)
7. ໂຄງການ ທີ່ສະໜັບສະໜູນ ແລະ ໃຫ້ຜົນປະໂຫຍດໂດຍກົງ ຫຼື ທາງອ້ອມແກ່ແມ່ຍິງ, ຄົນພິການ, ຄົນທີ່ມີຄວາມຫຼາກຫຼາຍທາງເພດ (LGBTIQ+), ບັນດາເຜົ່າ ຫຼື ກຸ່ມຄົນດ້ອຍໂອກາດອື່ນໆ.

# 8. ຂະບວນການຄັດເລືອກ

ຂະບວນການຄັດເລືອກສໍາລັບທຶນ AIG ໃນແຕ່ລະໄລຍະ ແລະ ແຕ່ລະຂັ້ນຕອນ ຈະມີດັ່ງນີ້:

### ໄລຍະທີ I:

#### *ຂັ້ນຕອນທີ 1*

LAI ກວດເບິ່ງບົດສະເໜີໂຄງການ ທຸກສະບັບທີ່ໄດ້ຮັບກ່ອນຮອດກໍານົດປິດຮັບ ເພື່ອຮັບປະກັນວ່າ ບົດສະເໜີໂຄງການເຫຼົ່ານັ້ນມີຄວາມສົມບູນ ແລະ ມີເອກະສານທັງໝົດຄົບຖ້ວນຕາມທີ່ຕ້ອງການ. ສະເພາະແຕ່ບົດສະເໜີໂຄງການທີ່ຂຽນຄົບຖ້ວນສົມບູນແລ້ວເທົ່ານັ້ນຈຶ່ງຈະຖືກພິຈາລະນາໃຫ້ຄົບຕາມເງື່ອນໄຂການຂໍທຶນ.

#### *ຂັ້ນຕອນທີ  2*

ຄະນະກໍາມະການຄັດເລືອກທຶນ AIG ຈະປະເມີນທຸກໆບົດສະເໜີໂຄງການທີ່ມີຄົບຕາມເງື່ອນໄຂທຶນ. ຄະນະກໍາມະການນີ້ຈະປະກອບດ້ວຍທີມງານຄຸ້ມຄອງທຶນ AIG ຂອງສະຖາບັນລາວ-ອົດສະຕຣາລີ (LAI) ແລະ ມີຜູ້ທົບທວນເອກະລາດ 1 ທ່ານ. ຄະນະກໍາມະການຈະໃຫ້ຄະແນນແກ່ບົດສະເໜີໂຄງການທີ່ຄົບເງື່ອນໄຂ ໂດຍທຽບກັບເງື່ອນໄຂການຄັດເລືອກທຶນ. LAI ຈະດໍາເນີນການກວດສອບຄວາມຖືກຕ້ອງທັງໝົດຂອງບົດສະເໜີໂຄງການທີ່ຜ່ານເຂົ້າຮອບສຸດທ້າຍເພື່ອໃຫ້ໄດ້ຮັບທຶນ.

#### *ຂັ້ນຕອນທີ 3*

LAI ສົ່ງຕໍ່ບັນດາບົດສະເໜີໂຄງການທີ່ຜ່ານເຂົ້າຮອບສຸດທ້າຍ ໄປເຖິງສະຖານທູດອົດສະຕຣາລີ ປະຈໍາລາວ (ໜ່ວຍງານສົ່ງເສີມການມີສ່ວນຮ່ວມຂອງອະດີດນັກສຶກສາ) ເພື່ອການປະເມີນຮອບສຸດທ້າຍ ແລະ ໃຫ້ການອະນຸມັດ.

### ໄລຍະທີ 2:

#### *ຂັ້ນຕອນທີ 4*

LAI ຈະແຈ້ງບອກຜູ້ສະໝັກຢ່າງເປັນລາຍລັກອັກສອນ ກ່ຽວກັບຜົນໄດ້ຮັບຂອງບົດສະເໜີໂຄງການຂອງເຂົາເຈົ້າ (ແຈ້ງທາງອີເມວ). ການແຈ້ງບອກຈະສົ່ງເຖິງຜູ້ສະໝັກ ພາຍໃນ 4 ອາທິດ ຫຼັງຈາກວັນປິດຮັບຄຳຮ້ອງ.

#### *ຂັ້ນຕອນ 5*

LAI ຈະເຜີຍແຜ່ລາຍລະອຽດກ່ຽວກັບຜູ້ໄດ້ຮັບທຶນ ຢູ່ໃນເວັບໄຊທ໌ ແລະ ໜ້າເຟດບຸກຂອງ LAI ພາຍຫຼັງສັນຍາການສະໜອງທຶນມີຜົນສັກສິດ.

ການຈັດຕັ້ງປະຕິບັດທຶນ ຄວນເລີ່ມຕົ້ນພາຍໃນ 3 ອາທິດຫຼັງຈາກເຊັນສັນຍາການສະໜອງທຶນ. ໃນກໍລະນີທີ່ການຈັດຕັ້ງປະຕິບັດມີຄວາມຊັກຊ້າ, ຜູ້ໄດ້ຮັບທຶນຄວນແຈ້ງເຫດຜົນໃຫ້ LAI ຮັບຮູ້ທັນທີ ແລະ ສະເໜີວັນທີໃໝ່ທີ່ຈະເລີ່ມໂຄງການໂດຍບໍ່ໃຫ້ເກີນ 6 ອາທິດຫຼັງຈາກວັນທີທີ່ມີການອະນຸມັດທຶນ ແລະ ຂອບເວລາການຈັດຕັ້ງປະຕິບັດອັນໃໝ່. ການລົ້ມເຫຼວໃນການເລີ່ມຕົ້ນຈັດຕັ້ງປະຕິບັດໂຄງການໃນເວລານີ້ ອາດພາໃຫ້ມີການຍົກເລີກສັນຍາການສະໜອງທຶນ ແລະ ຮຽກຮ້ອງໃຫ້ຜູ້ໄດ້ຮັບທຶນຕ້ອງໄດ້ສົ່ງເງິນທີ່ໂອນໃຫ້ແລ້ວ ກັບຄືນໃຫ້.

# 9. ຂໍ້ກຳນົດ ແລະ ເງື່ອນໄຂຂອງທຶນ

## 9.1 ຂໍ້ກຳນົດ ແລະ ເງື່ອນໄຂທົ່ວໄປ

ຜູ້ສະໝັກທີ່ປະສົບຜົນສຳເລັດຈະຕ້ອງເຊັນສັນຍາການສະໜອງທຶນຮ່ວມກັບສະຖາບັນລາວ-ອົດສະຕຣາລີ ແລະ ບໍລິສັດ Tetra Tech ໃນນາມຜູ້ຕາງໜ້າຂອງລັດຖະບານອົດສະຕຣາລີ (Commonwealth of Australia) ເຊິ່ງມີຕົວແທນແມ່ນ DFAT. ຂໍ້ກຳນົດ ແລະ ເງື່ອນໄຂທັງໝົດຂອງທຶນຈະລະບຸໄວ້ໃນສັນຍາການສະໜອງທຶນ ຈະບໍ່ສາມາດເບີກຈ່າຍທຶນນີ້ໃຫ້ໄດ້ຈົນກວ່າວ່າ LAI ຈະໄດ້ຮັບສັນຍາການສະໜອງທຶນທີ່ໄດ້ລົງລາຍເຊັນເປັນທີ່ຮຽບຮ້ອຍແລ້ວ.

ທຶນຊ່ວຍເຫຼືອນີ້ຈະຕ້ອງນຳໃຊ້ໃຫ້ສຳເລັດພາຍໃນ 8 ເດືອນຂອງການສະໜອງທຶນ. ຜູ້ສະໝັກຄວນແຈ້ງເຖິງ LAI ຢ່າງເປັນລາຍລັກອັກສອນ ເມື່ອຄາດວ່າການຈັດຕັ້ງປະຕິບັດກິດຈະກຳອາດຈະມີຄວາມຊັກຊ້າ, ເຊິ່ງອາດສະເໜີຂໍຂະຫຍາຍເວລາການຈັດຕັ້ງປະຕິບັດເມື່ອເກີດເຫດການສຸດວິໄສ. ຜູ້ໄດ້ຮັບທຶນ ຄວນແຈ້ງບອກ LAI ໃຫ້ໄວທີ່ສຸດເທົ່າທີ່ຈະເປັນໄປໄດ້ ຫາກມີບັນຫາໃນການຈັດຕັ້ງປະຕິບັດ ເພື່ອທີ່ LAI ຈະໄດ້ຊ່ວຍຫຼຸດຜ່ອນຜົນກະທົບ ແລະ ເຮັດໃຫ້ບັນລຸຜົນໄດ້ຮັບຂອງທຶນ. ເມື່ອມີການໂອນເງິນເຖິງບຸກຄົນ ຫຼື ອົງການຈັດຕັ້ງສຳລັບຈັດຕັ້ງປະຕິບັດໂຄງການໄປແລ້ວ ແຕ່ວ່າ ຜູ້ໄດ້ຮັບທຶນບໍ່ມີການດຳເນີນການໃດໆຕໍ່ອີກເປັນເວລາ 2 ເດືອນ, ຜູ້ໄດ້ຮັບເງິນນັ້ນ ຈະຕ້ອງໄດ້ສົ່ງເງິນທີ່ໂອນໃຫ້ນັ້ນກັບຄືນ.

ຜູ້ໄດ້ຮັບທຶນ ມີຄວາມຮັບຜິດຊອບຕໍ່ການບໍລິຫານທັງໝົດທີ່ຕິດພັນກັບໂຄງການຂອງຕົນ. ຄ່າໃຊ້ຈ່າຍດ້ານບໍລິຫານທີ່ຕິດພັນກັບໂຄງການ ຫຼື ກິດຈະກຳ ຄວນມີການລະບຸລາຍລະອຽດໄວ້ໃນແຜນງົບປະມານທີ່ຍື່ນພ້ອມກັບບົດສະເໜີໂຄງການຂໍທຶນ.

ທຶນນີ້ອາດຈະນໍາໃຊ້ສະເພາະແຕ່ການດໍາເນີນກິດຈະກໍາທີ່ຖືກອະນຸມັດແລ້ວ. ຖ້າມີການປ່ຽນແປງໃດໆ ກ່ຽວກັບປະເພດຂອງໂຄງການ ຫຼື ກິດຈະກໍາ ຕ້ອງໄດ້ຂໍອະນຸມັດຈາກ LAI ລ່ວງໜ້າເສຍກ່ອນ.

ບຸກຄົນອື່ນ ຫຼື ອົງການຈັດຕັ້ງອື່ນ ນອກເໜືອຈາກຜູ້ໄດ້ຮັບທຶນ ຈະບໍ່ສາມາດຈັດຕັ້ງປະຕິບັດກິດຈະກໍາທີ່ໄດ້ຮັບທຶນນີ້ໄດ້ ນອກຈາກວ່າ ຈະມີການອະນຸມັດຈາກ LAI ລ່ວງໜ້າເສຍກ່ອນ.

## 9.2 ການເບີກຈ່າຍເງິນທຶນ

ທຸກໆທຶນ ຈະຈ່າຍໃນສະກຸນເງິນກີບ ເປັນງວດໆ. LAI ຈະຈ່າຍ **50 ສ່ວນຮ້ອຍ**ຂອງມູນຄ່າທຶນ ຕາມສັນຍາການສະໜອງທຶນທີ່ເຊັນແລ້ວ, ຕາມດ້ວຍ **40 ສ່ວນຮ້ອຍ** ເມື່ອ LAI ໄດ້ຮັບບົດລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດທີ່ເປັນທີ່ເພິ່ງພໍໃຈ ແລະ ບົດລາຍງານການເງິນໄລຍະກາງຂອງໂຄງການ ຜ່ານທາງອີເມວ ແລະ ຕາມທີ່ກໍານົດໄວ້ໃນບົດແນະນໍາດ້ານການເງິນ ແລະ ອີກ **10 ສ່ວນຮ້ອຍ** ພາຍໃນ 14 ວັນ ຫຼັງຈາກຮັບບົດລາຍງານສິ້ນສຸດໂຄງການຢ່າງເປັນທີ່ເພິ່ງພໍໃຈ ແລະ ບົດລາຍງານການເງິນລວມ. ມູນຄ່າຂອງການໂອນເງິນງວດສຸດທ້າຍຈະຢູ່ບົນພື້ນຖານຄ່າໃຊ້ຈ່າຍຕົວຈິງສຸດທ້າຍທີ່ສົ່ງໃຫ້ LAI.

ຖ້າບົດລາຍງານທີ່ຍື່ນມານັ້ນບໍ່ສົມບູນ, ບໍ່ເປັນທີ່ເພິ່ງພໍໃຈຕໍ່ LAI, ກໍຈະຮຽກຮ້ອງໃຫ້ປັບປຸງບົດລາຍງານຄືນໃໝ່ ແລະ ຈະເບີກຈ່າຍໃຫ້ເມື່ອມີບົດລາຍງານນັ້ນເປັນທີ່ໜ້າເພິ່ງພໍໃຈ ແລະ ມີການອະນຸມັດແລ້ວ.

ການເບີກຈ່າຍໃນແຕ່ລະງວດ ຈະລະບຸໄວ້ໃນສັນຍາການສະໜອງທຶນ.

<u>ເມື່ອບົດສະເໜີໂຄງການຂໍທຶນໄດ້ຮັບການຮັບຮອງແລ້ວ ຈະບໍ່ມີທຶນເພີ່ມເຕີມມອບໃຫ້ກັບໂຄງການນັ້ນອີກ.</u>

## 9.3 ການສິ້ນສຸດ ຫຼື ການຖອນການສະໜອງທຶນ

LAI ຂໍສະຫງວນສິດໃນການລະງັບ ຫຼື ການຖອດຖອນການສະໜອງທຶນ, ຢຸດຕິໂຄງການ ຫຼື ກິດຈະກໍາ ຫຼື ຮຽກຮ້ອງໃຫ້ຜູ້ໄດ້ຮັບທຶນ ສົ່ງເງິນທັງໝົດ ຫຼື ບາງສ່ວນກັບຄືນ ຖ້າວ່າ:

- LAI ເຫັນວ່າຄວາມຄືບໜ້າຂອງໂຄງການ ຫຼື ກິດຈະກໍາ ບໍ່ເປັນທີ່ເພິ່ງພໍໃຈ.
- ຜູ້ໄດ້ຮັບທຶນບໍ່ດໍາເນີນກິດຈະກໍາທີ່ສະໜອງທຶນໃຫ້ຈົນສໍາເລັດ.
- ຜູ້ໄດ້ຮັບທຶນລົ້ມເຫຼວທີ່ຈະປະຕິບັດຕາມສັນຍາການສະໜອງທຶນ ຫຼື ບົດແນະນໍາທີ່ກ່ຽວຂ້ອງກັບ AIG.
- ຜູ້ໄດ້ຮັບທຶນລົ້ມເຫຼວທີ່ຈະປະຕິບັດຕາມຄໍາແນະນໍາທາງກົດໝາຍ ແລະ ຄໍາແນະນໍາທີ່ສົມເຫດສົມຜົນຂອງ LAI.

- LAI ເຊື່ອວ່າ ຜູ້ໄດ້ຮັບທຶນດຳເນີນໂຄງການໂດຍທີ່ບໍ່ເອົາໃຈໃສ່ເບິ່ງແຍງຢ່າງສົມເຫດສົມຜົນ, ບໍ່ມີຄວາມຮອບຄອບ ແລະ ຄວາມສາມາດ ຕາມມາດຕະຖານທີ່ຄາດຫວັງຈາກລະດັບປະສົບການຂອງຜູ້ໄດ້ຮັບທຶນໃນການປະຕິບັດວຽກງານ, ອາຊີບ ຫຼື ສາຍງານຂອງຕົນ.
- ຜູ້ໄດ້ຮັບທຶນ ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ແລະ ຂໍ້ມູນທີ່ພາໃຫ້ເຂົ້າໃຈຜິດ ໃຫ້ແກ່ LAI.
- ຜູ້ໄດ້ຮັບທຶນມີການປະພຶດຜິດກົດໝາຍ ຫຼື ມີການລະເລີຍໃນຊ່ວງໄລຍະທີ່ມີການສະໜອງທຶນ ແລະ LAI ເຊື່ອວ່າການປະຕິບັດນີ້ມີຜົນກະທົບທີ່ສຳຄັນຕໍ່ກັບໂຄງການ ຫຼື ມີຄວາມເປັນໄປໄດ້ຫຼາຍທີ່ຈະທຳລາຍພາບພົດຂອງ LAI ຫຼື ລັດຖະບານອົດສະຕຣາລີ.
- LAI ສົງໄສວ່າມີການສໍ້ໂກງ. ຖ້າຫາກຖືກພິຈາລະນາວ່າການສໍ້ໂກງໄດ້ເກີດຂຶ້ນແລ້ວ, LAI ອາດດຳເນີນຄະດີອາຍາ ຕາມຂໍ້ກຳນົດຂອງ DFAT ແລະ ກົດໝາຍທ້ອງຖິ່ນ.
- LAI ສົງໄສວ່າ ຜູ້ໄດ້ຮັບທຶນໄດ້ລະເມີດນະໂຍບາຍຂອງ DFAT ທີ່ກ່ຽວຂ້ອງກັບການປ້ອງກັນການກົດຂີ່ຂູດຮີດ, ການລ່ວງລະເມີດ ແລະ ການຄຸກຄາມທາງເພດ (PSEAH) ຫຼື ໄດ້ມີສ່ວນຮ່ວມໃນການກົດຂີ່ຂູດຮີດເດັກ ຫຼື ມີການລ່ວງລະເມີດເກີດຂຶ້ນໃນລະຫວ່າງການສະໜອງທຶນ.

LAI ຈະປະເມີນຈຳນວນເງິນທີ່ຈະຖືກສົ່ງຄືນ ໂດຍພິຈາລະນາວ່າ:

- ຜູ້ໄດ້ຮັບທຶນພົບພໍ້ກັບສະຖານະການທີ່ຢູ່ນອກການຄວບຄຸມ ຫຼືບໍ່.
- ຜູ້ໄດ້ຮັບທຶນສາມາດແກ້ໄຂບັນຫາໄດ້ໃນລະທີ່ດີພາຍໃນໄລຍະເວລາທີ່ເໝາະສົມ ຫຼືບໍ່.
- ສັດສ່ວນຂອງການຈັດຕັ້ງປະຕິບັດໂຄງການທີ່ສຳເລັດແລ້ວ.

## 9.4 ການເສຍອາກອນ

ຜູ້ໄດ້ຮັບທຶນ ມີຄວາມຮັບຜິດຊອບໃນການຊຳລະຈ່າຍພັນທະອາກອນຂອງຕົນເອງ ເຊິ່ງອາດຈະເກີດຂຶ້ນຈາກການສະໜອງທຶນນີ້.

## 9.5 ປະກັນໄພ

ຜູ້ໄດ້ຮັບທຶນ ຕ້ອງມີປະກັນໄພທີ່ຈຳເປັນ ຫຼື ເພື່ອອຳນວຍຄວາມສະດວກໃນການດຳເນີນໂຄງການຂອງເຂົາເຈົ້າ. ນີ້ລວມມີປະກັນໄພທີ່ຈຳເປັນສຳລັບອຸປະກອນຕ່າງໆ. LAI ບໍ່ມີຄວາມຮັບຜິດຊອບຕໍ່ກັບຄ່າໃຊ້ຈ່າຍທາງການແພດ, ໂຮງໝໍ ຫຼື ການອົບພະຍົບ ທີ່ເກີດຂຶ້ນໂດຍຜູ້ເຂົ້າຮ່ວມໂຄງການທີ່ LAI ສະໜອງທຶນໃຫ້.

ຜູ້ໄດ້ຮັບທຶນ ຕ້ອງສະໜອງ ຫຼັກຖານກ່ຽວກັບນະໂຍບາຍປະກັນໄພໃຫ້ແກ່ LAI ໃຫ້ທັນຕາມກຳນົດເວລາທີ່ຮ້ອງຂໍ, ເຊິ່ງໄດ້ກຳນົດໄວ້ໃນ ສັນຍາການສະໜອງທຶນ. ຜູ້ໄດ້ຮັບທຶນທີ່ມີການເດີນທາງຕ້ອງຢືນຢັນວ່າ ພວກເຂົາເຈົ້າໄດ້ອ່ານຄຳແນະນຳກ່ຽວກັບການເດີນທາງຂອງລັດຖະບານປະເທດອົດສະຕຣາລີ ສະບັບປະຈຸບັນ ສຳລັບ ປະເທດທີ່ພວກເຂົາເຈົ້າຈະເດີນທາງໄປ, ກ່ອນການເດີນທາງ.

# 10. ການສະໜັບສະໜູນ ແລະ ການແບ່ງປັນຄວາມຮູ້ໃຫ້ຜູ້ໄດ້ຮັບທຶນ

LAI ຈະຈັດກອງປະຊຸມປະຖົມນິເທດກ່ຽວກັບທຶນ (GO) ໃຫ້ແກ່ຜູ້ໄດ້ຮັບທຶນທຸກຄົນ ໃນຕອນເລີ່ມຕົ້ນຂອງໄລຍະເວລາການສະໜອງທຶນ. ກອງປະຊຸມປະຖົມນິເທດກ່ຽວກັບທຶນ ຈະເປັນໂອກາດທີ່ບັນດາຜູ້ໄດ້ຮັບທຶນຈະແບ່ງປັນຂໍ້ມູນກ່ຽວກັບໂຄງການຂອງເຂົາເຈົ້າ ແລະ ພັດທະນາເຄືອຄ່າຍກັບອະດີດນັກສຶກສາຄົນອື່ນໆ. ມັນຍັງເປັນການສ້າງໂອກາດໃຫ້ສະຖານທູດອົດສະຕຣາລີໄດ້ມີສ່ວນຮ່ວມກັບອະດີດນັກສຶກສາ. ງານນີ້ຈະຈັດແບບເຫັນໜ້າ ຕາມເວລາທີ່ໄດ້ວາງແຜນໄວ້.

ໃນກອງປະຊຸມປະຖົມນິເທດ, LAI ຈະສະໜອງຂໍ້ມູນກ່ຽວກັບການຄຸ້ມຄອງທຶນໃຫ້ແກ່ຜູ້ໄດ້ຮັບທຶນ, ລວມມີ ຂໍ້ກຳນົດຕ່າງໆສຳລັບ:

- ການຕິດຕາມການດຳເນີນງານ ແລະ ການປະເມີນຜົນຂອງໂຄງການ
- ການປະຊາສຳພັນ ແລະ ການສ້າງພາບລັກ (Publicity and branding)
- ການລາຍງານ ແລະ ການສະສາງທຶນ
- ການຄຸ້ມຄອງຄວາມສ່ຽງ ແລະ ການສໍ້ໂກງ
- ການປົກປ້ອງເດັກ
- ບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງສັງຄົມ

ພະນັກງານຂອງ LAI ຈະສືບຕໍ່ແນະນຳກ່ຽວກັບສິ່ງເຫຼົ່ານີ້ໃຫ້ແກ່ຜູ້ໄດ້ຮັບທຶນ ຕະຫຼອດໄລຍະຂອງການສະໜອງທຶນ. ໃນຕອນທ້າຍໄລຍະຂອງການສະໜອງທຶນ, ຖ້າໄດ້ຮັບອະນຸຍາດ, LAI ຈະຈັດງານປິດໂຄງການ ເພື່ອໃຫ້ຜູ້ໄດ້ຮັບທຶນໄດ້ສະແດງຜົນງານຂອງໂຄງການເຂົາເຈົ້າ ແລະ ໄດ້ພົບປະກັບອະດີດນັກສຶກສາຄົນອື່ນໆ ແລະ ສະຖານທູດອົດສະຕຣາລີອີກຄັ້ງ. ທີມງານສື່ສານມວນຊົນຂອງ LAI ອາດຈະຕິດຕໍ່ຫາຜູ້ໄດ້ຮັບທຶນ ເພື່ອສ້າງສື່ທີ່ມີເນື້ອໃນສົ່ງເສີມໂຄງການຂອງຜູ້ໄດ້ຮັບທຶນ.

# 11. ການຕິດຕາມການປະຕິບັດງານ ແລະ ການປະເມີນຜົນ

LAI ໃຫ້ການສະໜັບສະໜູນຜູ້ໄດ້ຮັບທຶນ ໃນການຕິດຕາມ, ປະເມີນຜົນ ແລະ ລາຍງານຜົນໄດ້ຮັບຂອງໂຄງການເຂົາເຈົ້າ. LAI ຈະຮຽກຮ້ອງໃຫ້ຜູ້ໄດ້ຮັບທຶນ ຂຽນບົດລາຍງານ ໂດຍອີງຕາມບັນດາຕົວຊີ້ບອກ ເຊິ່ງຂຶ້ນກັບປະເພດຂອງໂຄງການ ພ້ອມກັບ ມີການວິເຄາະດ້ານຄຸນນະພາບ ຕໍ່ກັບ ຜົນສຳເລັດ ແລະ ຜົນກະທົບຂອງໂຄງການ. ນອກຈາກນີ້, LAI ຈະດຳເນີນການຕິດຕາມການປະຕິບັດສັນຍາການສະໜອງທຶນ ຕະຫຼອດໄລຍະຂອງການສະໜອງທຶນ ເພື່ອຫຼຸດຜ່ອນຄວາມສ່ຽງດ້ານຄວາມສູນເສຍໃຫ້ເຫຼືອໜ້ອຍທີ່ສຸດ. LAI ອາດຈະຕິດຕໍ່ຜູ້ໄດ້ຮັບທຶນໃນເວລາໃດກໍໄດ້ ເພື່ອຖາມເຖິງຄວາມຄືບໜ້າຂອງໂຄງການ ແລະ ກິດຈະກຳຕ່າງໆ.

# 12. ການລາຍງານ ແລະ ການສະສາງທຶນ

ຜູ້ໄດ້ຮັບທຶນ ຕ້ອງສະໜອງບົດລາຍງານທີ່ມີເນື້ອໃນສົມບູນ ແລະ ບົດລາຍງານການເງິນຂອງໂຄງການ ໃນຊ່ວງໄລຍະດຳເນີນໂຄງການ ແລະ ຈົບໂຄງການ. ຂໍ້ກຳນົດໃນການລາຍງານຈະຕິດພັນກັບການເບີກຈ່າຍທຶນໃນແຕ່ລະງວດ. ຂໍໃຫ້ເບິ່ງດ້ານລຸ່ມສຳລັບເນື້ອໃນບົດລາຍງານ ແລະ ບົດລາຍງານການເງິນທີ່ກຳນົດໃຫ້.

| ທັງໝົດແມ່ນຈ່າຍເປັນ 3 ງວດ | |
|---|---|
| ***ການເບີກຈ່າຍ ງວດທີ 1*** | ເມື່ອເລີ່ມຕົ້ນສັນຍາການສະໜອງທຶນ |
| ***ການເບີກຈ່າຍ ງວດທີ 2*** | ເມື່ອບົດລາຍງານຄວາມຄືບໜ້າ ແລະ ບົດລາຍງານການເງິນໄລຍະກາງຂອງໂຄງການ ໄດ້ຮັບການອະນຸມັດ |
| ***ການເບີກຈ່າຍ ງວດສຸດທ້າຍ*** | ເມື່ອຮັບຮອງບົດລາຍງານສິ້ນສຸດໂຄງການ ແລະ ບົດລາຍງານການເງິນສະບັບສຸດທ້າຍ ກຳນົດສົ່ງບົດລາຍງານ ພາຍໃນ 7 ວັນ ຫຼັງຈາກສຳເລັດໂຄງການ |

ບົດລາຍງານຄວາມຄືບໜ້າ ແລະ ບົດລາຍງານການເງິນໄລຍະກາງຂອງໂຄງການ ໂດຍຜ່ານການຈັດຕັ້ງປະຕິບັດໂຄງການໄປໄດ້ໄລຍະໜຶ່ງແລ້ວ ແມ່ນສາມາດສົ່ງທາງອີເມວໄດ້ ໂດຍສົ່ງເຖິງທີມງານສົ່ງເສີມການມີສ່ວນຮ່ວມຂອງອະດີດນັກສຶກສາຂອງ LAI.

ຜູ້ສະໝັກທຶນທີ່ປະສົບຜົນສຳເລັດຈະໄດ້ຮັບໂຄງຮ່າງບົດລາຍງານສິ້ນສຸດໂຄງການ ແລະ ບົດລາຍງານການເງິນລວມ.

ຜູ້ໄດ້ຮັບທຶນຕ້ອງສະສາງທຶນທີ່ເຂົາເຈົ້າໄດ້ຮັບຈາກ LAI ຕາມເວລາທີ່ເໝາະສົມ. ຕ້ອງໄດ້ມີການສະສາງທຶນທັງໝົດໃຫ້ສຳເລັດພາຍໃນ 14 ວັນຫຼັງຈາກສຳເລັດໂຄງການ ໂດຍການສົ່ງບົດລາຍງານສິ້ນສຸດໂຄງການ ແລະ ບົດລາຍງານການເງິນລວມ. LAI ຂໍຮຽກຮ້ອງໃຫ້ມີສຳເນົາຂອງໃບບິນຮັບເງິນທັງໝົດ ແລະ ເອກະສານສະໜັບສະໜູນຮູບແບບອື່ນໆສຳລັບລາຍຈ່າຍເງິນ. ຜູ້ໄດ້ຮັບທຶນທີ່ໄດ້ຮັບທຶນອື່ນໆຈາກພາຍນອກ ເພື່ອສະໜັບສະໜູນໂຄງການນັ້ນ ແມ່ນຕ້ອງລະບຸການປະກອບສ່ວນຂອງຝ່າຍທີ 3 ໃນບົດລາຍງານການເງິນຂອງຕົນ. <u>ຜູ້ໄດ້ຮັບທຶນຈະຕ້ອງສົ່ງເງິນທີ່ບໍ່ໄດ້ຈ່າຍທັງໝົດຄືນໃຫ້ແກ່ LAI.</u>

ຂໍຮຽກຮ້ອງໃຫ້ບັນດາຜູ້ໄດ້ຮັບທຶນເກັບຮັກສາໃບບິນຮັບເງິນ ແລະ ເອກະສານບັນທຶກຕ່າງໆທີ່ເປັນຕົ້ນສະບັບ ເຊິ່ງກ່ຽວຂ້ອງກັບທຶນນີ້ໄວ້ ຢ່າງໜ້ອຍ 7 ປີ ໂດຍເປັນໄປຕາມນະໂຍບາຍຂອງ LAI ແລະ ຫຼັກການບັນຊີທີ່ຍອມຮັບທົ່ວໄປ (GAAP). ຜູ້ໄດ້ຮັບທຶນຕ້ອງສະໜອງສຳເນົາເອກະສານຕົ້ນສະບັບຂອງໃບຮັບເງິນ ແລະ ເອກະສານບັນທຶກຕ່າງໆ ໃຫ້ແກ່ LAI ເມື່ອມີການຮ້ອງຂໍ.

***<u>ຂໍຢ້ຳວ່າ ການລົ້ມເຫຼວທີ່ຈະຍື່ນເອກະສານລາຍງານທີ່ມີຄຸນນະພາບ ຕາມເວລາທີ່ກຳນົດໄວ້ໃນສັນຍາການສະໜອງທຶນ ຈະສົ່ງຜົນເຮັດໃຫ້ມີການສິ້ນສຸດການສະໜອງທຶນ ແລະ ທ່ານຈະບໍ່ມີເງື່ອນໄຂທີ່ຈະໄດ້ຮັບທຶນສະໜັບສະໜູນຈາກລັດຖະບານອິດສະຣາເອລໃນອະນາຄົດ.</u>***

# 13. ຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງສັງຄົມ

ລັດຖະບານອິດສະຣາເອລ ໃຫ້ຄຳໝັ້ນສັນຍາທີ່ຈະສົ່ງເສີມຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງແກ່ແມ່ຍິງ ແລະ ເດັກຍິງ. ຍຸດທະສາດຂອງ DFAT ກ່ຽວກັບຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງແກ່ແມ່ຍິງ (ສະບັບເດືອນກຸມພາ 2016) ກຳນົດເອົາ 3 ບູລິມະສິດເພື່ອຊີ້ນຳວຽກງານຄວາມສະເໝີພາບບົດບາດຍິງ-ຊາຍຂອງອິດສະຣາເອລ ຄື:

- ເສີມຂະຫຍາຍຄຳຄິດຄຳເຫັນຂອງແມ່ຍິງເຂົ້າໃນການຕັດສິນບັນຫາ, ການນຳພາ ແລະ ການສ້າງສັນຕິພາບ,
- ສົ່ງເສີມຄວາມເຂັ້ມແຂງດ້ານເສດຖະກິດຂອງແມ່ຍິງ, ແລະ
- ຢຸດຕິຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ.

ການພັດທະນາທີ່ມີສ່ວນຮ່ວມຈາກຜູ້ພິການ ກໍຍັງເປັນບູລິມະສິດຢ່າງໜຶ່ງຂອງການຮ່ວມມືລະຫວ່າງປະເທດຂອງອິດສະຣາເອລ. ການພັດທະນາສຳລັບທຸກຄົນແຕ່ 2015 – 2020 ຂອງ DFAT: ຍຸດທະສາດກ່ຽວກັບການສ້າງຄວາມເຂັ້ມແຂງໃຫ້ແກ່ການພັດທະນາທີ່ມີສ່ວນຮ່ວມຂອງຄົນພິການ ແຜນງານຊ່ວຍເຫຼືອຂອງອິດສະຣາເອລ ໄດ້ຊີ້ນຳໃຫ້ແຜນງການຊ່ວຍເຫຼືອຂອງອິດສະຣາເອລ ໃຫ້ສະໜັບສະໜູນຄົນພິການໃນບັນດາປະເທດທີ່ກຳລັງພັດທະນາ.

ການພິຈາລະນາກ່ຽວກັບປະເດັນທີ່ກ່ຽວກັບວຽກງານສົ່ງເສີມຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍທາງເພດ, ຄວາມພິການ ແລະ ການມີສ່ວນຮ່ວມຂອງທຸກຄົນໃນສັງຄົມ (GEDSI) ຈະມີຫຼາຍລະດັບ ໂດຍຂຶ້ນກັບປະເພດຂອງກິດຈະກຳທີ່ສະເໜີຂຶ້ນມາ, ແຕ່ຢ່າງໃດກໍຕາມ ***<u>ທຸກໆໂຄງການ ຍັງຕ້ອງສະແດງໃຫ້ເຫັນວ່າ ໄດ້ມີການພິຈາລະນາເຖິງວິທີການທີ່ໂຄງການນັ້ນຈະປະກອບສ່ວນສ້າງຄວາມເຂັ້ມແຂງແກ່ແມ່ຍິງ ແລະ ເດັກຍິງ, ສົ່ງເສີມຄວາມສະເໝີພາບບົດບາດຍິງ-ຊາຍ, ຄົນພິການ ແລະ ການມີສ່ວນຮ່ວມຂອງສັງຄົມ.</u>***
ທຸກໆກິດຈະກຳຈະຕ້ອງປະຕິບັດຕາມຫຼັກການທີ່ບໍ່ທຳລາຍ, ຮັບປະກັນວ່າ ເຂົາເຈົ້າບໍ່ໄດ້ເພີ່ມຄວາມຮຸນແຮງຕໍ່ຄວາມບໍ່ສະເໝີພາບຍິງ-ຊາຍທີ່ປະກົດມີຢູ່ແລ້ວ ສຳລັບຄົນພິການ.

LAI ຂໍເຊີນຊວນອະດີດນັກສຶກສາເພດຍິງ, ອະດີດນັກສຶກສາທີ່ມີຄວາມຫຼາກຫຼາຍທາງເພດ (LGBTIQ+), ອະດີດນັກສຶກສາທີ່ມີຄວາມພິການ ແລະ ອະດີດນັກສຶກສາທີ່ຢູ່ເຂດຫ່າງໄກ ຫຼື ຊົນເຜົ່າ ໃຫ້ຮ່ວມສະໝັກຂໍທຶນ AIG.

# 14. ການຄຸ້ມຄອງຄວາມສ່ຽງ ແລະ ການສໍ້ໂກງ

ຜູ້ໄດ້ຮັບທຶນຈະຕ້ອງໄດ້ທົບທວນ ແລະ ຄຸ້ມຄອງຄວາມສ່ຽງທີ່ພວກເຂົາໄດ້ກຳນົດໄວ້ໃນບົດສະເໜີໂຄງການຢ່າງເປັນປົກກະຕິຕະຫຼອດໄລຍະຂອງໂຄງການ. LAI ຮຽກຮ້ອງໃຫ້ຜູ້ໄດ້ຮັບທຶນລາຍງານຄວາມສ່ຽງຕົ້ນຕໍ ແລະ ການຕອບໂຕ້ຕໍ່ຄວາມສ່ຽງໃນເວລາທີ່ເໝາະສົມ. ນີ້ອາດລວມມີ ຄວາມສ່ຽງທີ່ຈະບັນລຸຈຸດປະສົງຂອງແຜນງານ, ຄວາມສ່ຽງຕໍ່ຜົນເສຍຫາຍ ແລະ ຄວາມສ່ຽງຕໍ່ພາບພົດຂອງ LAI ຫຼື ລັດຖະບານອົດສະຕຣາລີ.

ວິທີການຂອງ DFAT ໃນການກຳນົດ ແລະ ປະເມີນຄວາມສ່ຽງໃນການລົງທຶນຊ່ວຍເຫຼືອ ຈະປະຕິບັດຕາມມາດຕະການການຄຸ້ມຄອງຄວາມສ່ຽງສາກົນ (AS/NZS ISO 31000:2018). ຂໍ້ມູນເພີ່ມເຕີມກ່ຽວກັບການຄຸ້ມຄອງຄວາມສ່ຽງໃນແຜນງານການຊ່ວຍເຫຼືອ ແມ່ນມີຢູ່ໃນເວັບໄຊທ໌ຂອງ DFAT.

LAI ບໍ່ຍອມຮັບການສໍ້ໂກງ ແລະ ໃຫ້ຄຳໝັ້ນສັນຍາໃນການຫຼຸດຜ່ອນກໍລະນີສໍ້ໂກງ ໃຫ້ມີໜ້ອຍທີ່ສຸດ ໂດຍຜ່ານການພັດທະນາ, ການຈັດຕັ້ງປະຕິບັດ ແລະ ການທົບທວນຍຸດທະສາດການປ້ອງກັນ, ການກວດຈັບ ແລະ ການຕອບໂຕ້ກັບການສໍ້ໂກງ ຢ່າງເປັນປົກກະຕິ. LAI ຄາດຫວັງໃຫ້ຜູ້ໄດ້ຮັບທຶນທຸກຄົນ ໃຫ້ປະຕິບັດຕາມນະໂຍບາຍຂອງ DFAT ກ່ຽວກັບການຕ້ານການສໍ້ໂກງ, ແລະ ແຜນການຄວບຄຸມ ແລະ ຕ້ານການສໍ້ລາດບັງຫຼວງ. ໃນເອກະສານນະໂຍບາຍຕ້ານການສໍ້ໂກງ ນິຍາມ ການສໍ້ໂກງວ່າ 'ການມີຜົນປະໂຫຍດທີ່ບໍ່ຊື່ສັດ ຫຼື ເປັນສາເຫດຂອງຄວາມສູນເສຍ, ໂດຍການຫຼອກລວງ ຫຼື ດ້ວຍວິທີການອື່ນໆ'.

ນິຍາມນີ້ຂະຫຍາຍອອກນອກເໜືອນິຍາມທາງກົດໝາຍກ່ຽວກັບການສໍ້ໂກງ ເພື່ອໃຫ້ລວມເຖິງຜົນປະໂຫຍດທີ່ໄດ້ເຊິ່ງສາມາດເປັນທັງຮູບແບບທີ່ເປັນວັດຖຸ ແລະ ບໍ່ແມ່ນວັດຖຸ. ສະນັ້ນ ມັນກວມເຖິງ ກິດຈະກຳ ຫຼື ການປະພຶດທີ່ກວ້າງຂວາງກວ່າ ການນຳໃຊ້ເງິນ ແລະ ຊັບສິນແບບຜິດໆ ຫຼື ບໍ່ເໝາະສົມ ແລະ ລວມມີ:

# 15. ການປະຊາສຳພັນ ແລະ ອັດຕະລັກຂອງອົດສະຕຣາລີ

LAI ຊຸກຍູ້ໃຫ້ຜູ້ໄດ້ຮັບທຶນລົງໂຄສະນາກ່ຽວກັບໂຄງການຂອງເຂົາເຈົ້າໃນສື່ດັ້ງເດີມ ຫຼື ສື່ອອນລາຍ ແລະ ໂດຍຜ່ານເຄືອຄ່າຍຂອງຕົນເອງ. ການສະໜອງທຶນຂອງລັດຖະບານອົດສະຕຣາລີ ຄວນມີການຮັບຮູ້ຢ່າງເໝາະສົມໃນເອກະສານເຜີຍແຜ່, ບົດລາຍງານ, ຫຼັກສູດຝຶກອົບຮົມ, ກອງປະຊຸມປຶກສາຫາລື, ແລະ ໃນການນຳສະເໜີຢູ່ກອງປະຊຸມຕ່າງໆໂດຍໃຫ້ມີການນຳໃຊ້ຂໍ້ຈຳກັດຄວາມຮັບຜິດຊອບ (disclaimer) ທີ່ສະໜອງໃຫ້ດ້ານລຸ່ມ (ທັງໃນພາສາອັງກິດ ແລະ ພາສາລາວ)

> *ຂໍ້ຈຳກັດຄວາມຮັບຜິດຊອບ (Disclaimer): ບົດລາຍງານ/ບົດຄົ້ນຄວ້າ/ເອກະສານເຜີຍແຜ່ນີ້ ໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ. ຄວາມຄິດທີ່ສະແດງອອກໃນບົດລາຍງານ/ບົດຄົ້ນຄວ້າ/ເອກະສານເຜີຍແຜ່ເປັນຂອງນັກຂຽນ ແລະ ບໍ່ຈຳເປັນຈະສະແດງເຖິງຄວາມຄິດຂອງລັດຖະບານອົດສະຕຣາລີ.*

ຜູ້ໄດ້ຮັບທຶນ ຈະໄດ້ຮັບຄໍາແນະນໍາກ່ຽວກັບການໂຄສະນາໂຄງການຂອງຕົນກ່ອນທີ່ຈະເລີ່ມຈັດຕັ້ງປະຕິບັດໂຄງການ. ຄໍາແນະນໍານີ້ຈະໃຫ້ທິດທາງກ່ຽວກັບການສື່ສານແບບສະເພາະເຈາະຈົງ ແລະ ໃຫ້ທິດທາງກ່ຽວກັບການສ້າງເອກະສານທາງການຕະຫຼາດ ເຊິ່ງເປັນສ່ວນ ໜຶ່ງຂອງການຈັດຕັ້ງປະຕິບັດທຶນ.

ຜູ້ໄດ້ຮັບທຶນຈະຮັບຜິດຊອບແຕ່ພຽງຜູ້ດຽວຕໍ່ກັບຄວາມຄາດເຄື່ອນເຊິ່ງມີຢູ່ໃນເອກະສານເຜີຍແຜ່ ແລະ/ຫຼື ບົດລາຍງານຂອງທຶນເຂົາເຈົ້າ. ຜົນໄດ້ຮັບຂອງທຶນອາດບໍ່ຈໍາເປັນຈະຕ້ອງແມ່ນຄວາມຄິດທີ່ຮັບຮອງໂດຍ ກະຊວງການຕ່າງປະເທດ ແລະ ການຄ້າຂອງປະເທດອົດສະຕຣາລີ (DFAT) ຫຼື LAI.

LAI ຍິນດີທີ່ຈະໄດ້ຮັບສໍາເນົາທີ່ເປັນແບບເຈ້ຍ ຫຼື ແບບດິຈິຕອນ ຂອງສື່ ຫຼື ສິ່ງພິມທີ່ກ່າວເຖິງຜົນໄດ້ຮັບຂອງກິດຈະກໍາທີ່ໄດ້ຮັບການສະໜັບສະໜູນຈາກທຶນນີ້.

ຂໍຮຽກຮ້ອງໃຫ້ຜູ້ໄດ້ຮັບທຶນທຸກຄົນສະໜອງຮູບດິຈິຕອນທີ່ມີຄວາມຄົມຊັດສູງ ຈໍານວນ 5 ຮູບ, ພ້ອມກັບຄໍາອະທິບາຍຫຍໍ້ກ່ຽວກັບຮູບ ເຊິ່ງຈະໄດ້ນໍາມາໃຊ້ຢູ່ໃນເວັບໄຊທ໌ ຫຼື ຊ່ອງທາງສື່ສັງຄົມອອນລາຍຂອງ Global Alumni, LAI, ສະຖານທູດອົດສະຕຣາລີ ແລະ/ຫຼື DFAT.

ເວລາທີ່ໂຄສະນາສົ່ງເສີມ ໂຄງການໂດຍຜ່ານຊ່ອງທາງສື່ສັງຄົມອອນລາຍນັ້ນ, ຜູ້ໄດ້ຮັບທຶນຄວນນໍາໃຊ້ວະລີທີ່ຂຶ້ນຕົ້ນດ້ວຍເຄື່ອງໝາຍສີ່ລ່ຽມ (ຫຼື hashtags) ແລະ ວະລີທີ່ຂຶ້ນຕົ້ນດ້ວຍເຄື່ອງໝາຍ @ (ຫຼື handles) ດັ່ງຕໍ່ໄປນີ້:

| | |
|---|---|
| #BuildingLaosFutureTogether | @AustraliaAwards |
| #BuildingLaoLeaders | @AusGlobalAlumni |

# 16. ຊັບສິນທາງປັນຍາ

ຜູ້ໄດ້ຮັບທຶນ ຈະຄອບຄອງສິດທາງດ້ານຊັບສິນທາງປັນຍາທີ່ສ້າງຂຶ້ນໂດຍນໍາໃຊ້ທຶນນີ້ ຫຼື ສິ່ງທີ່ເປັນຜົນໄດ້ຮັບຈາກໂຄງການທີ່ໃຫ້ທຶນ. ຊັບສິນທາງປັນຍາ ໝາຍເຖິງ ເຄື່ອງໝາຍການຄ້າ, ລິຂະສິດ, ແບບອຸດສາຫະກໍາ ແລະ ສິດຕ່າງໆໃນຊອບແວຣ໌ຄອມພິວເຕີ, ຖານຂໍ້ມູນ ແລະ ລາຍຊື່ຕ່າງໆ, ສິດທີ່ມີໃນການປະດິດສ້າງ, ເຕັກໂນໂລຊີ, ວິທີການທົດລອງ ແລະ ຜົນສໍາເລັດຕ່າງໆ, ຂະບວນການ, ລະບົບ, ແນວຄວາມຄິດ, ລະບຽບຂັ້ນຕອນ, ເຕັກນິກ ແລະ ຄວາມຮູ້ ແລະ ທັກສະທໍາມະຊາດ, ສິດທິບັດ, ສິດດ້ານການຄຸ້ມຄອງພັນພືດ ແລະ ຊັບສິນທາງປັນຍາອື່ນໆທັງໝົດ ເຊິ່ງ ຄໍາສັບແມ່ນເປັນທີ່ເຂົ້າໃຈໄດ້ໂດຍທົ່ວໄປ, ທັງທີ່ໄດ້ຮັບການຂຶ້ນທະບຽນ ແລະ ບໍ່ໄດ້ຂຶ້ນທະບຽນ.

# 17. ຄວາມເປັນສ່ວນຕົວ ແລະ ອົດສະຫຼະຂອງຂໍ້ມູນ

ຂໍ້ມູນທີ່ທາງຜູ້ສະໝັກສະໜອງມານັ້ນຈະຖືກນໍາໃຊ້ໃນຂະບວນການສະໝັກ ແລະ ການປະເມີນບົດສະເໜີໂຄງການ. ຂໍ້ມູນນີ້ຈະເກັບຮັກສາໃນລະບົບຂອງ LAI, ເຊິ່ງທາງພະນັກງານຂອງ LAI, ບໍລິສັດ TETRA TECH International Development, ລັດຖະບານອົດສະຕຣາລີ ແລະ ລັດຖະບານແຫ່ງ ສປປ ລາວ ສາມາດເບິ່ງໄດ້ບົນພື້ນຖານຄວາມຈໍາເປັນທີ່

ຕ້ອງຮູ້. ຂໍ້ມູນທີ່ທາງຜູ້ສະໝັກສະໜອງໃຫ້ອາດຈະເຜີຍແຜ່ໃຫ້ສາທາລະນະຮູ້ ໂດຍຜ່ານສື່ລະດັບສູນກາງ ແລະ ທ້ອງຖິ່ນ ຫຼື ທາງ ເວັບໄຊທ໌ ຫຼື ຊ່ອງທາງສື່ສັງຄົມອອນລາຍຂອງ Global Alumni, LAI, ສະຖານທູດອົດສະຕຣາລີ ແລະ/ຫຼື DFAT.

ນອກຈາກນີ້ LAI ແລະ DFAT ອາດຈະເຜີຍແຜ່ຂໍ້ມູນນີ້, ໂດຍປັດສະຈາກຂໍ້ມູນສ່ວນບຸກຄົນ, ຢູ່ໃນປຶ້ມລາຍງານປະຈໍາປີຂອງ ຕົນ. ໃນກໍລະນີອື່ນໆ, LAI ຈະພຽງແຕ່ນຳໃຊ້ ແລະ/ຫຼື ເປີດເຜີຍຂໍ້ມູນສ່ວນບຸກຄົນ ໂດຍອີງຕາມກົດໝາຍດ້ານຂໍ້ມູນສ່ວນ ບຸກຄົນປີ 1988. ຜູ້ສະໝັກ ຍັງຄວນຮັບຮູ້ເຖິງບົດບັນຍັດຕ່າງໆຂອງກົດໝາຍວ່າດ້ວຍອິດສະຫຼະຂອງຂໍ້ມູນ ປີ 1982 ເຊິ່ງນໍາ ໃຊ້ກັບເອກະສານຕ່າງໆທີ່ LAI ແລະ DFAT ເປັນເຈົ້າຂອງ.

ເບິ່ງຂໍ້ມູນເພີ່ມເຕີມກ່ຽວກັບນະໂຍບາຍຂອງ DFAT ກ່ຽວກັບ ຂໍ້ມູນສ່ວນຕົວ ຢູ່ທີ່ (https://www.dfat.gov.au/about-us/corporate/privacy/Pages/privacy).

# 18. ການປົກປ້ອງເດັກ

ນະໂຍບາຍຂອງ DFAT ກ່ຽວກັບການປົກປ້ອງເດັກ DFAT's Child Protection Policy (2017) ແນໃສ່ການສ້າງ ແລະ ບຳລຸງຮັກສາສະພາບແວດລ້ອມທີ່ປົກປ້ອງເດັກນ້ອຍ ແລະ ປ້ອງກັນເຂົາເຈົ້າຈາກການສະແຫວງຫາຜົນປະໂຫຍດ ແລະ ການທາລຸນທຸກຮູບແບບ ໃນການສະໜອງແຜນງານຊ່ວຍເຫຼືອຂອງປະເທດອົດສະຕຣາລີຢູ່ຕ່າງປະເທດ. ບຸກຄົນທີ່ໄດ້ຮັບທຶນ ທຸກໆຄົນຕ້ອງໄດ້ເຊັນເອກະສານຈັນຍາບັນຂອງ DFAT ວ່າດ້ວຍການປົກປ້ອງເດັກ (ຂໍໃຫ້ເບິ່ງເອກະສານຊ້ອນທ້າຍ 2 ຂອງ ນະໂຍບາຍການປົກປ້ອງເດັກ) ແລະ ຂໍໃຫ້ມີການກວດກາຂອງຕຳຫຼວດ ຖ້າວ່າມີການຕິດຕໍ່ກັບເດັກນ້ອຍ. ອົງການຈັດຕັ້ງທີ່ສະ ໝັກຂໍທຶນ ຕ້ອງໄດ້ສະໜອງຫຼັກຖານທີ່ສະແດງວ່າອົງການຈັດຕັ້ງຂອງຕົນມີກົດຈັນຍາບັນໃນການປົກປ້ອງເດັກ ເຊິ່ງສອດຄ່ອງ ກັບນະໂຍບາຍຂອງ DFAT ກ່ຽວກັບການປົກປ້ອງເດັກ (ຂໍໃຫ້ເບິ່ງເອກະສານຊ້ອນທ້າຍ 1 ຂອງນະໂຍບາຍການປົກປ້ອງ ເດັກ).

DFAT Preventing Sexual Exploitation Abuse and Harassment (PSEAH) Policy (2019) ແນໃສ່ ເພື່ອຮັບປະກັນວ່າກິດຈະກໍາເຊັ່ນການພັດທະນາ ແລະ ການຊ່ວຍເຫຼືອດ້ານມະນຸດສະທຳ ທີ່ໄດ້ຮັບທຶນຊ່ວຍເຫຼືອຈາກ ລັດຖະບານອົດສະຕຣາລີທັງໝົດ ແມ່ນຖືກຈັດຕັ້ງປະຕິບັດໃນທາງທີ່ປອດໄພ, ໃຫ້ກຽດ ແລະ ປາສະຈາກການກົດຂີ່ຂູດຮີດ, ການລ່ວງລະເມີດ ຫຼື ການຄຸກຄາມທາງເພດ.

# 19. ຄຳຮ້ອງທຸກ ແລະ ການອຸທອນ

ຄຳຄິດຄຳເຫັນ, ຄຳຖາມ ແລະ ຄຳຮ້ອງທຸກ ທີ່ຕິດພັນກັບການດຳເນີນການ ແລະ ການຄັດເລືອກບົດສະເໜີໂຄງການ ຄວນ ເຮັດເປັນລາຍລັກອັກສອນ ແລະ ສົ່ງເຖິງ alumni@laosaustraliainstitute.org . ຄຳອຸທອນທີ່ມີຕໍ່ຄຳຕັດສິນໃນການ ຄັດເລືອກຜູ້ໄດ້ຮັບທຶນ ຈະບໍ່ໄດ້ຮັບການພິຈາລະນາ.

# 20. ລາຍລະອຽດໃນການຕິດຕໍ່

ທີມງານສົ່ງເສີມການມີສ່ວນຮ່ວມຂອງອະດີດນັກສຶກສາ
ສະຖາບັນລາວ-ອົດສະຕຣາລີ
ຖະໜົນເສດຖາທິລາດ
ບ້ານຊຽງຢືນ
ເມືອງຈັນທະບູລີ
(ໜ້າຫໍພະແກ້ວ)
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: +856 21 265721-2
ອີເມວ: alumni@laosaustraliainstitute.org